# ຈົດໝາຍຂ່າວ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ



ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

## ບົດຄວາມ ໃນສະບັບນີ້:

### ກອງປະຊຸມ ແລະ ກິດຈະກຳຕ່າງໆໂດຍ LIWG

- ກອງປະຊຸມສະມາຊິກຫຼັກ LIWG
- ກອງປະຊຸມແລກປ່ຽນບົດຮຽນ ກ່ຽວກັບເລື່ອງທີ່ດິນ, ປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
- ງານນຳສະເໜີ ປະຕິທິນກົດໝາຍສະບັບປີ 2023

### ອັບເດດຂ່າວສານໂຄງການ PIASVC

- PIASVC: ສາງເຄື່ອງມືການໃຫ້ຄຳປຶກສາທາງດ້ານກົດໝາຍ ແລະ ການປູກຈິດສຳນຶກ
- PIASVC: ກອງປະຊຸມຝຶກອົບຮົມສຳລັບຄູຝຶກ

### ໜ່ວຍງານວິຊາການ ຂະແໜງການຍ່ອຍທີ່ດິນ

- ກອງປະຊຸມ LSSWG ຄັ້ງທີ 2 ປະຈຳປີ 2022

### ແນະນຳບົດຄວາມອ່ານ:

- ບົດຄວາມແນະນຳອ່ານ, ສື່ສິ່ງພິມ ແລະ ຂ່າວສານກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ



### ກິດຈະກຳຂອງສະມາຊິກ LIWG

- JVC ຈັດງານເປີດໂຕປະຕິທິນກົດໝາຍ 2023 ຢູ່ ເຊກອງ
- SAEDA ຮ່ວມເປັນຜູ້ນຳກຸ່ມວິຊາການ ກ່ຽວກັບການລົງທຶນທາງດ້ານກະສິກຳຢ່າງມີຄວາມຮັບຜິດຊອບ (RAI)
- ງານປະກວດແມວພັນ ແລະ ເຂົ້າ ປະຈຳປີ 2022

### ຂ່າວເດັ່ນປະຈຳໄຕມາດ!

ຂ່າວເດັ່ນກ່ຽວກັບປະເດັນ ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ປະຈຳໄຕມາດ

### ກິດຈະກຳ ແລະ ຂ່າວສານ ປະຈຳໄຕມາດ ມັງກອນ - ເມສາ ທີ່ຈະມາເຖິງ!



# ກິດຈະກຳຂອງສະມາຊິກ LIWG

## JVC ຈັດງານເປີດໂຕປະຕິທິນກົດໝາຍ 2023 ຢູ່ ເຊກອງ



ອົງການ ອາສາສະໝັກຍີ່ປຸ່ນ ປະຈຳລາວ (JVC) ຈັດງານເປີດໂຕປະຕິທິນກົດໝາຍ 2023 ໃນວັນທີ 21 ທັນວາ 2022 ທີ່ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ເຊກອງ, ໂດຍເປັນປະທານກອງປະຊຸມໂດຍ ທ່ານ ບຸນລິດ ສັກບົວວົງ, ຮັກສາການຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມແຂວງເຊກອງ, ມີຕາງຫນ້າຈາກກົມທີ່ດິນ, ກະຊວງກະສິກຳ, ອົງການອາສາສະຫມັກຍີ່ປຸ່ນປະຈຳລາວ (ເຈວີຊີ), ພະແນກການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ, ກຸ່ມບ້ານ ແລະ ບໍລິສັດ ພາຍໃນແຂວງເຂົ້າຮ່ວມ.

ການເປີດໂຕໃນຄັ້ງນີ້ ແມ່ນເພື່ອໃຫ້ປະຊາຊົນບັນດາເຜົ່າ ເຂດຫ່າງໄກສອກຫລີກສາມາດເຂົ້າເຖິງຂໍ້ມູນຂ່າວສານໄດ້ຫລາຍຂຶ້ນ, ເປັນການສົ່ງເສີມ-ສະໜັບສະຫນູນໃຫ້ອົງການປົກຄອງທ້ອງຖິ່ນໄດ້ນຳໃຊ້ສື່ສິ່ງພິມ ໄປເຜີຍແຜ່ໂຄສະນາກ່ຽວກັບວຽກບໍລິຫານຈັດການ-ຄຸ້ມຄອງທີ່ດິນ ແລະຊັບພະຍາກອນທຳມະຊາດ, ເພື່ອສົ່ງເສີມໃຫ້ປະຊາຊົນ ແລະທຸກພາກສ່ວນໄດ້ມີສ່ວນຮ່ວມໃນການພັດທະນາແບບຍືນຍົງ, ແນໃສ່ເຜີຍແຜ່ຂໍ້ມູນພື້ນຖານທາງດ້ານກົດຫມາຍ ໃຫ້ປະຊາຊົນຮັບຮູ້, ເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງຕັ້ງຫນ້າ, ຊ່ວຍຫລຸດຜ່ອນການເຂົ້າໃຈຜິດ ຫລື ຂໍ້ຂັດແຍ່ງ ຊຶ່ງອາດເກີດຂຶ້ນລະຫວ່າງນັກລົງທຶນຕ່າງປະເທດ ແລະ ຊຸມຊົນທ້ອງຖິ່ນ ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຕ່າງໆ, ສ້າງຄວາມຮັບຮູ້ ແລະຄວາມເຂົ້າໃຈແຈ້ງໃຫ້ກັບຊຸມຊົນທ້ອງຖິ່ນກ່ຽວກັບສິດ ແລະພັນທະຂອງຕົນ ທີ່ລະບຽບກົດຫມາຍກຳນົດໄວ້ ຊຶ່ງພົວພັນກັບທີ່ດິນ ແລະຊັບພະຍາກອນທຳມະຊາດທີ່ຕົນຄອບຄອງ ແລະນຳໃຊ້ຢູ່.
ອ່ານບົດຄວາມຕົ້ນສະບັບໄດ້ທີ່: https://bit.ly/40e6JcP

## SAEDA ຮ່ວມເປັນຜູ້ນຳກຸ່ມວິຊາການ ກ່ຽວກັບການລົງທຶນທາງດ້ານກະສິກຳຢ່າງມີຄວາມຮັບຜິດຊອບ (RAI)

ນັບຕັ້ງແຕ່ເດືອນຕຸລາ 2022, SAEDA, ເຊິ່ງເປັນ ສະມາຊິກຂອງ LIWG, ຮ່ວມເປັນຜູ້ນຳກຸ່ມວິຊາການກ່ຽວກັບການລົງທຶນທາງດ້ານກະສິກຳຢ່າງມີຄວາມຮັບຜິດຊອບພາຍໃຕ້ ໜ່ວຍງານວິຊາການ ຂະແໜງການຍ່ອຍທີ່ດິນ (LSSWG). ໃນເດືອນພະຈິກ 2022, DALaM ໄດ້ເຂົ້າຮ່ວມກັບ SAEDA ໃນການເປັນປະທານຮ່ວມຂອງ ກຸ່ມວິຊາການ. ໃນເດືອນທັນວາ 2022, SAEDA ແລະ DALaM ໄດ້ດຳເນີນກອງປະຊຸມປຶກສາຫາລືຜູ້ມີສ່ວນກ່ຽວຂ້ອງຫຼາຍຝ່າຍ ເພື່ອສ້າງເງື່ອນໄຂການອ້າງອີງ ແລະ ແຜນການດຳເນີນງານຂອງກຸ່ມວິຊາການປະຈຳປີ 2023. ໃນຄັ້ງນີ້ ມີການເຂົ້າຮ່ວມຂອງບັນດາກະຊວງທີ່ກ່ຽວຂ້ອງ [1], ຄູ່ຮ່ວມມືພັດທະນາ, ອົງການສາກົນທີ່ບໍ່ຂຶ້ນກັບລັດຖະບານ (INGO), ອົງການຈັດຕັ້ງທາງສັງຄົມ. (CSOs), ແລະ ສະຖາບັນການສຶກສາ ແລະ ການຄົ້ນຄວ້າ.

[1] ຜູ້ຕາງໜ້າກະຊວງກະສິກຳ ແລະ ປ່າໄມ້ (ກົມຄຸ້ມຄອງທີ່ດິນກະສິກຳ, ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ, ກົມແຜນການ ແລະ ການຮ່ວມມື, ກົມທີ່ດິນ–ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກົມສົ່ງເສີມການລົງທຶນ–ກະຊວງແຜນການການລົງທຶນ

ອ່ານຕໍ່ໜ້າຖັດໄປ >>>



## ງານປະກວດແນວພັນ ແລະ ເຂົ້າ ປະຈຳປີ 2022

ຈຸດປະສົງຫຼັກຂອງງານປະກວດຄັ້ງນີ້ແມ່ນເພື່ອເປັນການຊຸກຍູ້ສົ່ງເສີມການຜະລິດແນວພັນຂອງຊາວກະສິກອນລາວ ແລະ ປຶກສາຫາລືກ່ຽວກັບທິດທາງແຜນການໃນການຜະລິດແນວພັນໃນລາວ ແລະ ປັບປຸງນະໂຍບາຍແນວພັນແຫ່ງຊາດ ໂດຍສະເພາະການຢັ້ງຢືນແນວພັນ ແລະ ນະໂຍບາຍທີ່ກ່ຽວຂ້ອງ. ເຊິ່ງງານນີ້ຈັດຂຶ້ນໂດຍເຄືອຂ່າຍຊາວກະສິກອນລາວ (LFN), ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ ແລະ ກົມປູກຝັງ, ໂດຍທຶນສະໜັບສະໜູນຈາກ SIDA ແລະ OXFAM ໃນລະຫວ່າງວັນທີ 14 ຫາ 15 ທັນວາ 2022.

ຊາວກະສິກອນໄດ້ວາງສະແດງສິນຄ້າກະສິກຳເຊັ່ນ: ເຂົ້າ, ກາເຟ ແລະ ຜັກໃນງານວາງສະແດງ. ຫຼາຍກວ່າ 15 ບູດຈາກເຄືອຂ່າຍຊາວກະສິກອນລາວ ແລະ ສະມາຊິກອົງ NAFRI ໄດ້ນຳເອົາແນວພັນເຂົ້າ ມາວາງສະແດງເພື່ອແບ່ງປັນ, ວາງສະແດງ ແລະ ຂາຍໃນງານຄັ້ງນີ້.

ທ່ານສາມາດຕິດຕາມງານດັ່ງກ່າວໄດ້ທີ່ ເຄືອຂ່າຍຊາວກະສິກອນລາວ Lao Farmer Network

# ກອງປະຊຸມ ແລະ ກິດຈະກຳ ໂດຍ LIWG

## ງານວາງສະແດງຜົນງານ ແລະ ຜະລິດຕະພັນອົງການຈັດຕັ້ງສັງຄົມ ປະຈຳປີ 2022

ລະຫວ່າງວັນທີ 25 ຫາ 27 ພະຈິກ 2022, ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG ໄດ້ເຂົ້າຮ່ວມງານວາງສະແດງຜົນງານ ແລະ ຜະລິດຕະພັນອົງການຈັດຕັ້ງສັງຄົມ ປະຈຳປີ 2022 ເຊິ່ງຈັດຕັ້ງໂດຍ ກອງເລຂາຫ້ອງການປະສານງານອົງການຈັດຕັ້ງທາງສັງຄົມລາວ (LCCO) ທີ່ ຫໍວັດທະນະທຳ, ນະຄອນຫຼວງວຽງຈັນ. ເຊິ່ງປີນີ້ ເປັນປີ 4 ແລະ ປະກອບມີຫຼາຍ 60 ອົງການຈັດຕັ້ງທາງສັງຄົມເຂົ້າຮ່ວມພາຍໃນງານ.







ສຳລັບປີນີ້, LIWG ໄດ້ນຳເອົາເອກະສານທາງວິຊາການຫຼາກຫຼາຍຫົວຂໍ້ນຳໄປວາງສະແດງຢູ່ພາຍໃນງານ ເຊັ່ນ: ກໍລະນີສຶກສາ, ບົດສັງລວມຫຍໍ້, ຄູ່ມື ແລະ ເຄື່ອງມືປູຈິດສຳນຶກທີ່ກ່ຽວກັບປະເດັນທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ການສົ່ງເສີມສິດຂອງແມ່ຍິງກ່ຽວກັບທີ່ດິນ ແລະ ທີ່ສຳຄັນຍັງມີ ປະຕິທິນກົດໝາຍປີ 2023 ທີ່ໄດ້ສຳເລັດໃນການພັດທະນາ ແລະ ພິມເຜີຍແຜ່.
ອ່ານເພີ່ມເຕີມກ່ຽວກັບງານດັ່ງກ່າວໄດ້ທີ່: https://bit.ly/3iXNPq6

ອ່ານຕໍ່ໜ້າຖັດໄປ >>>



## ກອງປະຊຸມສະມາຊິກຫຼັກ LIWG

ໃນວັນທີ 1 ເດືອນພະຈິກ 2022, LIWG ຈັດກອງປະຊຸມສະມາຊິກຫຼັກເພື່ອອັບເດດວຽກງານ ແລະ ການເຄື່ອນໄຫວພາຍໃນເຄືອຂ່າຍ, ເຊິ່ງມີ 4 ຫົວຂໍ້ສະເໜີໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ກ່ຽວກັບການປັບປຸງຍຸດທະສາດ LIWG ແຕ່ປີ 2023-2025, ປະເດັນກ່ຽວກັບການວາງແຜນນຳໃຊ້ທີ່ດິນໃນເຂດປ່າສະຫງວນແຫ່ງຊາດນ້ຳແອດ-ພູເລີຍ ທີ່ ແຂວງຫຼວງພະບາງ, ການອັບເດດຂ່າວສານຂອງກຸ່ມວິຊາການກ່ຽວກັບການລົງທຶນທີ່ດິນແບບຍືນຍົງ/RAI ແລະ ອັບເດດຈາກໂຄງການ PIASVC. ພາຍໃນກອງປະຊຸມນີ້, ຜູ້ເຂົ້າຮ່ວມໄດ້ມີໂອກາດແລກປ່ຽນກ່ຽວກັບຫົວຂໍ້ຕ່າງໆ, ໂດຍສະເພາະການປະຕິບັດໂຄງການຂອງ WCS ໃນເຂດປ່າສະຫງວນແຫ່ງຊາດນ້ຳແອດ-ພູເລີຍ ແຂວງຫຼວງພະບາງ (https://bit.ly/3wmfqVa) ເຊິ່ງກ່ຽວກັບຄວາມຕໍ່ທ້າທາຍການນຳໃຊ້ທີ່ດິນບໍລິເວນອ້ອມຂ້າງອຸທະຍານແຫ່ງຊາດ. ນອກຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ຖືກເຊື້ອເຊີນໃຫ້ເຂົ້າຮ່ວມກອງປະຊຸມໃຫຍ່ປະຈຳປີ ຂອງ LIWG ໃນປີ 2023. ຂໍ້ມູນຂອງເຫດການຈະຖືກແບ່ງປັນໃນສະບັບຕໍ່ໄປໃນເດືອນມັງກອນ - ເດືອນເມສາ 2023.

ເບິ່ງບົດນຳສະເໜີໄດ້ທີ່ https://bit.ly/3k6DbxE

## ກອງປະຊຸມແລກປ່ຽນບົດຮຽນ ລະຫວ່າງ ອົງການຈັດຕັ້ງທາງສັງຄົມລາວ ລວມທັງພະນັກງານລາວຈາກ ອົງການຈັດຕັ້ງສາກົນທີ່ເຮັດວຽກກ່ຽວກັບເລື່ອງທີ່ດິນ, ປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ



ໃນວັນທີ 30 ພະຈິກ 2022, ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG ໄດ້ຈັດກອງປະຊຸມແລກປ່ຽນບົດຮຽນ ລະຫວ່າງ ອົງການຈັດຕັ້ງທາງສັງຄົມລາວ ລວມທັງພະນັກງານລາວຈາກອົງການຈັດຕັ້ງສາກົນທີ່ເຮັດວຽກກ່ຽວກັບເລື່ອງທີ່ດິນ, ປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ ສູນຝຶກອົບຮົມສູນກາງແນວລາວສ້າງຊາດ, ນະຄອນຫຼວງວຽງຈັນ. ເຊິ່ງເຂົ້າຮ່ວມໂດຍຕາງໜ້າ ພະນັກງານທີ່ເປັນຄົນລາວຈາກບັນດາອົງການຈັດຕັ້ງສັງຄົມລາວ ແລະ ອົງການຈັດຕັ້ງສາກົນ.

ເຊິ່ງເປົ້າໝາຍລວມຂອງກອງປະຊຸມແມ່ນເພື່ອເປັນເວທີໃຫ້ອົງການຈັດຕັ້ງທາງສັງຄົມລາວລວມທັງພະນັກງານລາວຈາກອົງການຈັດຕັ້ງສາກົນໄດ້ມີໂອກາດໃນການແລກປ່ຽນບົດຮຽນຮ່ວມກັນ, ພັດທະນາການສື່ສານ ແລະ ການຮ່ວມມືກັນໃຫ້ດີຂຶ້ນເພື່ອປະສິດທິຜົນອັນດີງາມ. ທີ່ສຳຄັນແຂກຮັບເຊີນທີ່ມານຳສະເໜີແລກປ່ຽນບົດຮຽນແມ່ນຈາກ MRLG, DoL, PIASVC Project ແລະ LIFE Project.

## ອັບເດດຂ່າວສານໂຄງການ PIASVC

### PIASVC: ສາງເຄື່ອງມືການໃຫ້ຄຳປຶກສາທາງດ້ານກົດໝາຍ ແລະ ການປູກຈິດສຳນຶກ

ພາຍຫຼັງກອງປະຊຸມປຶກສາຫາລື 4 ຄັ້ງ ໃນການຄັດເລືອກ ແລະ ສະຫຼຸບເຄື່ອງມື ແລະ ເອກະສານກ່ຽວກັບການໃຫ້ຄຳປຶກສາດ້ານກົດໝາຍ ແລະ ການປູກຈິດສຳນຶກໃຫ້ແກ່ບັນດາອົງກອນທີ່ໄດ້ຮັບທຶນຍ່ອຍຂອງ PIASVC ເຊິ່ງໄດ້ເລີ່ມຂຶ້ນໃນເດືອນເມສາ 2022. ເຊິ່ງເຄື່ອງມື ແລະ ເອກະສານທັງໝົດທີ່ຄັດເລືອກມາຈາກຫຼາຍອົງການຈັດຕັ້ງໄດ້ຄັດເລືອກສຳເລັດແລ້ວ ແລະ ປະຈຸບັນກຳລັງຢູ່ໃນຂັ້ນຕອນການປັບປຸງການອອກແບບ ແລະ ປັບປຸງເນື້ອໃນໃຫ້ເໝາະສົມກັບປະຈຸບັນ ແລະ ເໝາະສົມກັບການນຳໃຊ້ໃນລະດັບທ້ອງຖິ່ນ.

ເມື່ອໄດ້ຮັບການປັບປຸງ ແລະ ອະນຸມັດຈາກອົງກອນຕ່າງໆແລ້ວ, ເຄື່ອງມື ແລະ ເອກະສານທັງໝົດຈະຖືກແບ່ງປັນໃຫ້ບັນດາອົງກອນທີ່ໄດ້ຮັບທຶນຍ່ອຍເພື່ອນຳໃຊ້ໃນການຈັດຕັ້ງປະຕິບັດກິດຈະກຳຢູ່ພື້ນທີ່ໂຄງການຂອງຕົນເອງ.

ອ່ານຕໍ່ໜ້າຖັດໄປ >>>



## PIASVC: ກອງປະຊຸມຝຶກອົບຮົມສຳລັບຄູຝຶກ





LIWG ແລະ Helvetas Laos ໄດ້ຈັດການຝຶກອົບຮົມສຳລັບຄູຝຶກ (ToTs) ຫຼາຍຄັ້ງໃຫ້ແກ່ຕົວແທນຈາກອົງກອນຜູ້ໄດ້ຮັບທຶນຍ່ອຍຂອງໂຄງການ PIASVC. ເຊິ່ງມີ 2 ToTs ເພີ່ມເຕີມທີ່ໄດ້ຈັດຂຶ້ນໃນລະຫວ່າງເດືອນກັນຍາ ຫາເດືອນຕຸລາ 2022, ເຊັ່ນ: ສັນຍາກະສິກຳ ແລະ ສິດທີ່ດິນຕາມປະເພນີ. ເພື່ອຈັດ ToTs ເຫຼົ່ານັ້ນ, LIWG ແລະ Helvetas Laos ໄດ້ເຮັດວຽກຢ່າງໃກ້ຊິດກັບຄູຝຶກ ແລະ ຜູ້ຊ່ຽວຊານທີ່ມີຄວາມຮູ້ ແລະ ຄວາມສາມາດສະເພາະດ້ານ, ເຊິ່ງຄູຝຶກມາຈາກໂຄງການ LIFE ແລະ ບໍລິສັດກົດໝາຍ ແລະ ພັດທະນາການຮ່ວມມື LDP ເປັນຜູ້ປະສານງານການຝຶກອົບຮົມ ເພື່ອເຮັດໃຫ້ຜູ້ເຂົ້າຮ່ວມໄດ້ມີປະສົບການ ແລະ ຄວາມເຂົ້າໃຈຢ່າງເຕັມທີ່ຕໍ່ຫົວຂໍ້ຕ່າງໆນັ້ນ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ 5 ToTs ທີ່ຜ່ານມາ, ກະລຸນາເຂົ້າໄປເບິ່ງລາຍການຂ້າງລຸ່ມນີ້:

- 5th ToT: ສັນຍາກະສິກຳ - ກະລຸນາອ່ານເພີ່ມເຕີມທີ່ https://bit.ly/3DLnxPE
- 6th ToT: ສິດທີ່ດິນຕາມປະເພນີ - ກະລຸນາອ່ານເພີ່ມເຕີມທີ່ https://bit.ly/3iVIUFY

ນອກຈາກນັ້ນ, ປະຈຸບັນໄດ້ມີຂະບວນການລວບລວມຄູ່ມື ແລະ ເອກະສານທັງໝົດ 6 ToTs, ເຊິ່ງຈະລວມເຂົ້າກັນເປັນຊຸດຄູ່ມື ແລະ ວັດສະດຸຂອງແຕ່ລະ ToT. ເຄື່ອງມືເຫຼົ່ານີ້ຈະຖືກນຳໃຊ້ໂດຍຜູ້ໃຫ້ທຶນຍ່ອຍໃນເວລາທີ່ກິດຈະກຳປູກຝັງໄດ້ຮຽນຮູ້ຈາກ ToTs ຂອງ PIASVC ໃນລະດັບທ້ອງຖິ່ນ.

## ໜ່ວຍງານວິຊາການ ຂະແໜງການຍ່ອຍທີ່ດິນ

### ກອງປະຊຸມໜ່ວຍງານວິຊາການ ຂະແໜງການຍ່ອຍທີ່ດິນ ຄັ້ງທີ 2 ປະຈຳປີ 2022

ໃນວັນທີ 13 ຕຸລາ 2022, ກອງປະຊຸມ LSSWG ຄັ້ງທີ 2 ປະຈຳປີ 2022 ໄດ້ຈັດຂຶ້ນທີ່ Crowne Plaza ເຊິ່ງເປັນເຈົ້າພາບຮ່ວມໂດຍ GIZ, Helvetas Laos/ LIWG ແລະ MonRE. ເຊິ່ງມີ 3 ຈຸດປະສົງຫຼັກຂອງກອງປະຊຸມຄັ້ງນີ້ ເພື່ອອັບເດດຜົນສຳເລັດ ແລະ ຄວາມຄືບໜ້າການຈັດຕັ້ງປະຕິບັດຈາກແຕ່ລະກຸ່ມວິຊາການ (FG), ແລກປ່ຽນ ແລະ ປຶກສາຫາລືກ່ຽວກັບສະພາບການສັນຍາກະສິກຳໃນລາວ ແລະ ເປີດກ້ວາງການແລກປ່ຽນ ແລະ ປະກອບຄຳຄິດເຫັນຈາກສະມາຊິກຂອງ LSSWG ໃນຫົວຂໍ້ທີ່ຈະນຳມາສະເໜີໃນກອງປະຊຸມຄັ້ງຕໍ່ໄປ. ສຳລັບກອງປະຊຸມຄັ້ງນີ້, ຖືວ່າລັດຖະບານມີຄວາມຕັ້ງໃຈສູງໃນການປັບປຸງການຄຸ້ມຄອງທີ່ດິນໃຫ້ທັນສະໄໝ ແລະ ຄາດວ່າກົດໝາຍທີ່ດິນຈະມີບົດບາດສຳຄັນໃນປະເດັນດັ່ງກ່າວ. ເຊິ່ງ LSSWG ຄວນເປັນເວທີການແລກປ່ຽນ ແລະ ການປະສານງານເພື່ອສະໜັບສະໜູນຂະບວນການນີ້.

ນອກຈາກນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ແລກປ່ຽນຄຳຄິດເຫັນ ແລະ ສະເໜີຫົວຂໍ້ທີ່ໜ້າສົນໃຈໃຫ້ແກ່ກອງປະຊຸມ LSSWG ຄັ້ງຕໍ່ໄປ, ເຊິ່ງປະກອບມີການປະເມີນມູນຄ່າທີ່ດິນ ລວມທັງການນຳສະເໜີລະບຽບການປະເມີນມູນຄ່າ ແລະ ຜົນການວິໄຈຜົນໄດ້ຮັບຈາກກໍລະນີສຶກສາຂອງທະນາຄານໂລກ, ການມີສ່ວນຮ່ວມຂອງຊາວໜຸ່ມໃນຂະແໜງກະສິກຳຜ່ານການພັດທະນາທຸລະກິດກະສິກຳຊົນນະບົດ ແລະ ຜົນກະທົບທີ່ອາດຈະເກີດຂຶ້ນຂອງກົດລະບຽບການຫ້າມການທຳລາຍປ່າຂອງສະຫະພາບເອີຣົບກ່ຽວກັບທີ່ດິນ ແລະ ຂະແໜງກະສິກຳໃນ ສປປ ລາວ.

ນອກຈາກນັ້ນ, LSSWG ໄດ້ປະຕິບັດຢ່າງເປັນທາງການໃນການສ້າງກຸ່ມວິຊາການໃຫມ່ກ່ຽວກັບ ການລົງທຶນທາງດ້ານກະສິກຳຢ່າງມີຄວາມຮັບຜິດຊອບ (RAI) ເຊິ່ງຮ່ວມນຳພາໂດຍ SAEDA.

ອ່ານຕໍ່ໜ້າຖັດໄປ >>>



# ປະຕິທິນກົດໝາຍ ປີ 2023

## ກອງປະຊຸມ ຜ່ານຮ່າງປະຕິທິນກົດໝາຍ ປີ 2023



ໃນຕອນເຊົ້າຂອງ ວັນຈັນ ທີ 27 ກັນຍາ 2023, ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ໄດ້ຈັດກອງປະຊຸມ ຜ່ານຮ່າງປະຕິທິນກົດໝາຍ ປີ 2023 ລະຫວ່າງທີມງານຜະລິດປະຕິທິນກົດໝາຍ ແລະ ພາກລັດ ທີ່ ໂຮງແຮມ ລາວເທວ, ນະຄອນຫຼວງວຽງຈັນ. ໂດຍການເປັນປະທານກອງປະຊຸມໂດຍ ທ່ານ ອະໂນໄທ ຈັນທະລາສີ, ຮອງກົມທີ່ດິນ - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເຊິ່ງເຂົ້າຮ່ວມຈາກພາກສ່ວນຕ່າງໆ ທັງບັນດາອົງການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງສາກົນ ແລະ ພາກລັດທີ່ກ່ຽວຂ້ອງ.

ຈຸດປະສົງຫຼັກຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອຜ່ານຮ່າງປະຕິທິນກົດໝາຍ ປີ 2023 ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ເຊິ່ງຕາງໜ້າຈາກພາກລັດ, ແລະ ໄດ້ລາຍງານກ່ຽວກັບວຽກງານຂະບວນການຜະລິດປະຕິທິນກົດໝາຍທີ່ຜ່ານມາ ແລະ ແນະນຳຫົວຂໍ້, ເນື້ອໃນ ແລະ ຮູບພາບ ປະຕິທິນ ປີ 2023. ນອກຈາກນີ້, ຜູ້ເຂົ້າຮ່ວມຍັງໄດ້ປະກອບຄຳເຫັນໃສ່ຮ່າງເນື້ອໃນ ແລະ ຮູບພາບປະຕິທິນ ເພື່ອໃຫ້ມີເນື້ອໃນຄົບຖ້ວນ ແລະ ເຂົ້າໃຈງ່າຍຍິ່ງຂຶ້ນ.

## ງານຝຶກອົບຮົມ ToT ປະຕິທິນກົດໝາຍປີ 2023

ໃນລະຫວ່າງ ວັນທີ 9-11 ພະຈິກ 2022 ທີ່ຜ່ານມາ, ໂຄງການໄລຟ໌ (LIFE) ຮ່ວມກັບ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ໄດ້ຈັດງານຝຶກອົບຮົມການເປັນຄູຝຶກໃນການເຜີຍປະຕິທິນກົດໝາຍປີ 2023 ກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ ໃຫ້ແກ່ຜູ້ຕາງໜ້າຈາກບັນດາອົງກອນສະມາຊິກຫຼັກຂອງ LIWG ແລະ ບັນດາອົງກອນທີ່ໄດ້ຮັບທຶນຍ່ອຍເພື່ອຈັດຕັ້ງປະຕິບັດໂຄງການ ຈາກໂຄງການ PIASVC, ເຊິ່ງງານຝຶກອົບຮົມດັ່ງກ່າວແມ່ນຈັດຂຶ້ນທີ່ ສູນຝຶກອົບຮົມສູນກາງແນວລາວສ້າງຊາດ, ນະຄອນຫຼວງວຽງຈັນ, ແລະ ດຳເນີນການຝຶກອົບຮົມຕະຫຼອດໄລຍະເວລາ 3 ມື້ ໂດຍ ຄູຝຶກ ຈາກໂຄງການໄລຟ໌. ໃນໄລຍະການຝຶກອົບຮົມ, ຜູ້ເຂົ້າຮ່ວມໄດ້ຮຽນຫຼາກຫຼາຍຫົວຂໍ້ ທີ່ນຳສະເໜີໃນປະຕິທິນກົດໝາຍປີ 2023. ຫຼັງຈາກການຝຶກອົບຮົມດັ່ງກ່າວ ຜູ້ເຂົ້າຮ່ວມຈະນຳເອົາບົດຮຽນ ແລະ ທັກສະທີ່ໄດ້ຮຽນຮູ້ໃນຄັ້ງນີ້ ໄປເຜີຍແຜ່ ແລະ ແຈກຢາຍປະຕິທິນກົດໝາຍ ປີ 2023 ໃຫ້ກັບພາກສ່ວນອື່ນໆ ລວມເຖິງຊຸມຊົນ ໃນພື້ນທີ່ເປົ້າໝາຍຂອງແຕ່ລະອົງກອນ.
ອ່ານຂໍ້ມູນເພີ່ມເຕີມໄດ້ທີ່
https://bit.ly/3wo9PgS

## ງານນຳສະເໜີ ປະຕິທິນກົດໝາຍສະບັບປີ 2023

ໃນວັນທີ 1 ທັນວາ 2022 ທີ່ຜ່ານມາ ກອງເລຂາ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ພ້ອມດ້ວຍ ບັນດາສະມາຊິກ ໄດ້ຈັດງານ ເປີດໂຕປະຕິທິນກົດໝາຍ ສະບັບປີ 2023 ກ່ຽວກັບ ທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍມີຜູ້ເຂົ້າຮ່ວມຈາກ ບັນດາອົງການຈັດຕັ້ງທາງສັງຄົມ ແລະ ພາກລັດ ເຂົ້າຮ່ວມງານໃນຄັ້ງນີ້.

ພາຍໃນງານ ຕົວແທນຈາກທີມງານ ຜະລິດປະຕິທິນກົດໝາຍປີ 203 ໄດ້ນຳສະເໜີ ໂດຍລວມ ບັນດາຫົວຂໍ້ປະຈຳປີນີ້ ເຊິ່ງປະກອບມີ 6 ຫົວຂໍ້ຫຼັກ ທີ່ຕິດພັນກັບທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຄື: 1. ການໄດ້ຮັບສິດນຳໃຊ້ທີ່ດິນ, 2. ການຂຶ້ນທະບຽນອອກໃບຕາດິນ, 3. ການຈັດການ, ການບຳບັດສານເຄມີ ແລະ ສິ່ງເສດເຫຼືອ, 4. ການວາງແຜນຄຸ້ມຄອງ ແລະ ຟື້ນຟູປ່າໄມ້ຂັ້ນບ້ານ, 5. ສິດສະເໝີພາບຍິງ-ຊາຍ ໃນການມີຊື່ໃນໃບຕາດິນ, 6. ຈັນຍາບັນ, ສິດ ແລະ ໜ້າທີ່ ຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.

ນອກຈາກການນຳສະເໜີຫົວຂໍ້ປະຈຳປີ 2023 ແລ້ວ ພາຍໃນງານ ກໍ່ຍັງໄດ້ມີການນຳເອົາບັນດາປະຕິທິນກົດໝາຍ ຕັ້ງແຕ່ສະບັບປີ 2010 (ສະບັບປີທຳອິດ) ມາວາງສະແດງ ພ້ອມທັງບັນດາຮູບພາບ ກິດຈະກຳທີ່ກ່ຽວກັບງານເຜີຍແຜ່ປະຕິທິນ ທີ່ທາງສະມາຊິກເຮົາໄດ້ນຳໄປເຜີຍແຜ່ໃນຫຼາຍຊຸມຊົນ.

ເບິ່ງວີດີໂອການເປີດໂຕປະຕິທິນໄດ້ທີ່ https://fb.watch/ie0PByvqg4/
ເບິ່ງປະຕິທິນໄດ້ທີ່ https://bit.ly/3i8G9gF

ອ່ານຕໍ່ໜ້າຖັດໄປ >>>



## ຄູ່ຮ່ວມງານ

### ກໍລະນີສຶກສາ: ການຄຸ້ມຄອງປ່າໄມ້ຕາມປະເພນີຂອງແມ່ຍິງໃນ ສປປ ລາວ

ກໍລະນີສຶກສານີ້ແມ່ນການສຳຫຼວດຈຸດຕັດລະຫວ່າງລະບົບການຄອບຄອງທີ່ດິນຕາມປະເພນີ ແລະ ບົດບາດຍິງ-ຊາຍໃນສອງໝູ່ບ້ານໃນພູ້ບ້ານແຂວງຜົ້ງສາລີ ທາງພາກເໜືອຂອງລາວ. ປະເທດລາວເປັນປະເທດທີ່ມີຄວາມຫຼາກຫຼາຍທາງດ້ານປະຊາກອນທີ່ເປັນຊົນເຜົ່າ ເຊິ່ງພວກເຂົາຕ້ອງອາໃສຊັບພະຍາກອນປ່າໄມ້ ແລະ ຊັບພະຍາກອນທຳມະຊາດອື່ນໆໃນການດຳລົງຊີວິດ. ຊຸມຊົນເຫຼົ່ານີ້ມີບົດບາດສຳຄັນໃນການອະນຸລັກພູມສັນຖານທີ່ຊັບຊ້ອນນີ້. ເຖິງຢ່າງໃດກໍ່ຕາມການປະຕິບັດຕາມປະເພນີໃນການຄອບຄອງທີ່ດິນຍັງບໍ່ທັນໄດ້ຮັບການບັນທຶກຢ່າງພຽງພໍ ເຮັດໃຫ້ມີຄວາມເຂົ້າໃຈໃນດ້ານນີ້ໜ້ອຍຫຼາຍ, ແລະ ຍິ່ງມີຄວາມເຂົ້າໃຈໜ້ອຍກວ່າເມື່ອເວົ້າເຖິງຄວາມສຳພັນລະຫວ່າງເພດ ໃນລະບົບຮີດຄອງປະເພນີ. ອີງຕາມການຄົ້ນຄວ້າພາກສະໜາມ, ບົດຄົ້ນຄວ້ານີ້ໄດ້ສົມທຽບລະຫວ່າງສອງ ຊົນເຜົ່າທີ່ມີຄວາມແຕກຕ່າງກັນ, ໄດ້ແກ່ຊົນເຜົ່າກຶມມຸ ອູ ແລະ ໄຕຂາວ. ເຖິງວ່າຈະມີຄວາມໃກ້ຄຽງ ກັນທາງພູມສາດ, ແຕ່ການສຶກສາຄັ້ງນີ້ກໍ່ໄດ້ສະແດງໃຫ້ເຫັນວ່າ ທັງສອງຊົນເຜົ່າມີຄວາມແຕກຕ່າງ ກັນແນວໃດໃນດ້ານການຄຸ້ມຄອງປ່າໄມ້ ແລະ ບົດບາດຍິງ-ຊາຍ. ການສຶກສາໄດ້ພົບວ່າແມ່ຍິງມີຄວາມສຳພັນຢ່າງໃກ້ຊິດກັບປ່າໄມ້ຫຼາຍກວ່າ ແຕ່ຜັດມີສິດໃນປ່າໄມ້ໜ້ອຍກວ່າ ຜູ້ຊາຍ (ເຊັ່ນ ສິດໃນການສືບທອດມໍລະດົກ ແລະ ການເຂົ້າເຖິງລາຍຮັບທີ່ມາຈາກປ່າໄມ້)

ອ່ານເພີ່ມເຕີມໄດ້ທີ່ເວັບໄຊທ໌ https://laolandinfo.org/en/category/resource/publications/

## ບົດຄວາມແນະນຳ

### ສັນຍາກະສິກຳ: ປະຕິທິນກົດໝາຍ ປະຈຳເດືອນ ກັນຍາ-ຕຸລາ ປີ 2022




ປະຕິທິນກົດໝາຍ ປະຈຳເດືອນ ກັນຍາ – ຕຸລາ ປີ 2022 ນຳສະເໜີຫົວຂໍ້ “ສັນຍາກະສິກຳ” ໂດຍມີຈຸດປະສົງເພື່ອສະແດງໃຫ້ເຫັນເຖິງການເຮັດສັນຍາກະສິກຳ ກ່ຽວກັບ ການປູກຝັງ, ລ້ຽງສັດ ແລະ ການປະມົງ ເຊິ່ງຕ້ອງປະຕິບັດ ສິດ ແລະ ພັນທະຕໍ່ກັນ ເພື່ອພາໃຫ້ເກີດການປ່ຽນແປງ ຫຼື ສິ້ນສຸດລົງ. ເຊິ່ງໃນຮູບພາບ ໄດ້ສະແດງໃຫ້ເຫັນການຊື້-ຂາຍ ສິນຄ້າຫຼາກຫຼາຍຊະນິດ ລະຫວ່າງຊາວບ້ານ ແລະ ພໍ່ຄ້າ ທີ່ມີການເຮັດສັນຍາກະສິກຳ ໂດຍມີ ອຳນາດການປົກຄອງບ້ານ ເປັນຜູ້ຢັ້ງຢືນໃຫ້ ໂດຍມີເນື້ອໃນເປັນເອກະພາບກັນທັງສອງຝ່າຍ ເຊັ່ນ ຊະນິດສິນຄ້າ, ຈຳນວນ, ລາຄາ ແລະ ການປະຕິບັດຕາມສັນຍາຂອງທັງ ຜູ້ຊື້ ແລະ ຜູ້ຂາຍ.

ອ່ານຂໍ້ມູນເພີ່ມເຕີມທີ່ https://bit.ly/3j0sIDu

### ການສືບທອດມູນມໍຣະດົກກ່ຽວກັບທີ່ດິນ: ປະຕິທິນກົດໝາຍ ປະຈຳເດືອນ ພະຈິກ-ທັນວາ ປີ 2022




ປະຕິທິນກົດໝາຍ ປະຈຳເດືອນ ພະຈິກ – ທັນວາ ປີ 2022 ນຳສະເໜີຫົວຂໍ້ “ການສືບທອດມູນມໍຣະດົກກ່ຽວກັບທີ່ດິນ” ເປັນສິດທີ່ຖືກກຳນົດໄວ້ໃນກົດໝາຍ, ແຕ່ປະຊາຊົນສ່ວນຫຼາຍແມ່ນຍັງຂາດຄວາມເຂົ້າໃຈທີ່ຖືກຕ້ອງ ໂດຍສະເພາະການສືບທອດມູນມໍຣະດົກກ່ຽວກັບທີ່ດິນ. ສະນັ້ນ, ໃນຮູບພາບນີ້ແມ່ນສະແດງໃຫ້ເຫັນຊັບເດີມ ແລະ ສິນສົມສ້າງ ທີ່ເປັນເຮືອນ ແລະ ທີ່ດິນປຸກສ້າງ, ທີ່ດິນນາ ຫຼື ທີ່ດິນສວນ, ຜູ້ສືບທອດມູນມໍຣະດົກຕາມກົດໝາຍ ແລະ ການສືບທອດມູນມໍຣະດົກຕາມພິໄນກຳ ຊຶ່ງລວມມີ ຂັ້ນຕອນການເຮັດພິໄນກຳເປັນລາຍລັກອັກສອນ ແລະ ພິໄນກຳທາງປາກເປົ່າ. ທຸກຂັ້ນຕອນແມ່ນມີຄວາມສຳຄັນຕໍ່ກັບການສືບທອດມູນມໍຣະດົກກ່ຽວກັບທີ່ດິນ ຕາມທີ່ກຳນົດໄວ້ໃນກົດໝາຍ.

ອ່ານຂໍ້ມູນເພີ່ມເຕີມທີ່ https://bit.ly/3D8UJzD

ອ່ານຕໍ່ໜ້າຖັດໄປ >>>



## ປະຕິທິນກົດໝາຍປີ 2023 ແລະ ປຶ້ມຄູ່ມືແນະນຳການຝຶກອົບຮົມປະຕິທິນກົດໝາຍປີ 2023




ປະຕິທິນກົດໝາຍປີ 2023 ແລະ ປຶ້ມຄູ່ມືແນະນຳການຝຶກອົບຮົມປະຕິທິນກົດໝາຍປີ 2023 LIWG ໄດ້ເຜີຍແຜ່ປະຕິທິນກົດໝາຍປີ 2023 ແລະ ປຶ້ມຄູ່ມືແນະນຳການຝຶກອົບຮົມປະຕິທິນກົດໝາຍ ປີ 2023

ຜ່ານທາງເວັບໄຊທ໌. ປະຕິທິນກົດໝາຍປີ 2023 ປະກອບດ້ວຍ 6 ຫົວຂໍ້ທີ່ຕິດພັນກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ຄວາມສະເໝີພາບທາງເພດ ແລະ ໜ່ວຍງານໄກ່ເກ່ຍຂັ້ນບ້ານ. ຄູ່ມືແນະນຳການຝຶກອົບຮົມປະຕິທິນກົດໝາຍປີ 2023 ແມ່ນໄດ້ພັດທະນາຂຶ້ນ ເພື່ອເປັນຄູ່ມືສະໜັບສະໜູນການຝຶກອົບຮົມໃຫ້ທີມງານຜູ້ຜະລິດປະຕິທິນທີ່ຕາງໜ້າຈາກ ອົງການຈັດຕັ້ງລັດ, ອົງການຈັດຕັ້ງທາງສັງ ຄົມ ອົງການຈັດຕັ້ງສາກົນ ແລະ ສະຖາບັນການສຶກສາ ນັກວິຊາການ ຜູ້ທີ່ຈະນຳເອົາປະຕິທິນກົດໝາຍໄປເປັນສື່ໂຄສະນາເຜີຍແຜ່ດ້ວຍຮູບແບບຕ່າງໆ ເພື່ອສະໜັບສະໜູນວຽກງານໂຄສະນາເຜີຍແຜ່ຂໍ້ມູນ ຂ່າວສານຜ່ານປະຕິທິນກົດໝາຍໃຫ້ມີປະສິດທິພາບ, ຫຼາກຫຼາຍຫົວຂໍ້ທີ່ຕິດພັນກັບການດຳລົງຊີວິດຂອງປະຊາຊົນລາວ ລວມທັງກຳນົດວັນສຳຄັນຕ່າງໆທາງລັດຖະການ ແລະ ສາກົນ ຊຶ່ງກວມເອົາຫຼາຍຂະແໜງການ ເຊັ່ນ ທີ່ດິນ, ປ່າໄມ້, ກະສິກຳ, ສິ່ງແວດລ້ອມ, ການມີສ່ວນຮ່ວມຂອງປະຊາຊົນໃນໂຄງການພັດທະນາ ແລະ ການຍົກສູງບົດບາດຍິງ-ຊາຍ.

ເບິ່ງປະຕິທິນກົດໝາຍປີ 2023 ສະບັບເຕັມ ທີ່ເວັບໄຊທ໌ https://bit.ly/3FymoM0 ແລະ ປຶ້ມຄູ່ມືແນະນຳການຝຶກອົບຮົມປະຕິທິນກົດໝາຍປີ 2023 ທີ່ https://bit.ly/3X1vx5K.

# ເວັບໄຊທ໌ແຫຼ່ງຄວາມຮູ້ ແລະ ສື່ສິ່ງພິມແນະນຳອ່ານ

## ຄຳຖາມທີ່ປະກົດເລື້ອຍໆ (FAQs) ກ່ຽວກັບຄວາມຮຸນແຮງບົນພື້ນຖານທາງເພດ, ຄວາມເປັນພິການແລະການຈ້າງງານ, ແລະ ທີ່ດິນ ແລະ ປ່າໄມ້

ພວກເຮົາຂໍແຈ້ງມາຍັງບັນດາທ່ານຊາບວ່າ ປະຈຸບັນ ຄຳຖາມທີ່ມັກຖືກຖາມເລື້ອຍໆ (FAQs) ທີ່ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ໄດ້ມີສ່ວນຮ່ວມໃນການລວບລວມຄຳຖາມທີ່ກ່ຽວຂ້ອງກັບທີ່ດິນ ແລະ ປ່າໄມ້ ເຊິ່ງໄດ້ຖືກອະນຸມັດໂດຍ ກະຊວງຍຸຕິທຳ. ເຊິ່ງມີທັງໝົດ 26 ຖາມ-ຕອບ ທີ່ກ່ຽວຂ້ອງກັບ 3 ຂົງເຂດ ເຊັ່ນ: ຄວາມຮຸນແຮງບົນພື້ນຖານທາງເພດ, ຄວາມເປັນພິການແລະ ການຈ້າງງານ, ແລະ ທີ່ດິນ ແລະ ປ່າໄມ້ ເຊິ່ງໄດ້ຖືກອັບໂຫຼດຂຶ້ນໃນ ຮູບແບບການຊ່ວຍເຫຼືອທາງດ້ານກົດໝາຍຜ່ານລະບົບດີຈີຕອນ.

ທ່ານສາມາດເບິ່ງລາຍລະອຽດຂໍ້ມູນຕາມລິ້ງດ້ານລຸ່ມນີ້:
DLAP: https://legal-aid.moj.gov.la/ ຫຼື FAQs: https://legal-aid.moj.gov.la/faq/

## ບົດລາຍງານ MRLG ແລະ RECOFTC ກ່ຽວກັບບົດບາດຍິງຊາຍ, ສິດຄອບຄອງ ແລະ ການປະຕິບັດທາງປະເພນີໃນພື້ນທີ່ປ່າໄມ້

MRLG ໄດ້ເຜີຍແຜ່ບົດລາຍງານຂອງ RECOFTC ທີ່ອີງໃສ່ 10 ໂຄງການຄົ້ນຄວ້າທີ່ດຳເນີນຢູ່ 18 ແຫ່ງໃນ 7 ປະເທດຄື: ກຳປູເຈຍ, ອິນໂດເນເຊຍ, ສປປ ລາວ, ມຽນມາ, ເນປານ, ໄທ ແລະ ຫວຽດນາມ. ການສຶກສາໄດ້ສ້າງພື້ນຖານຂອງສັງລວມບົດຄັດຫຍໍ້ຈາກຂົງເຂດທີ່ຄົ້ນຄວ້າທີ່ໄດ້ເຜີຍແຜ່ພ້ອມກັບບົດລາຍງານ (ທີ່ນີ້ https://bit.ly/3Cm3A0o).
ທ່ານສາມາດອ່ານບົດລາຍງານດັ່ງກ່າວໄດ້ທີ່ລິ້ງ https://bit.ly/3WOxmmy.

ນອກຈາກນີ້, ຍັງມີບົດລາຍງານໃໝ່ກ່ຽວກັບການຮັບຮູ້ສິດຄອບຄອງນຳໃຊ້ຕາມປະເພນີຢູ່ຊຸມຊົນທີ່ດຳລົງຊີວິດຢູ່ເຂດປ່າໄມ້ໃນກຳປູເຈຍ, ສປປ ລາວ, ມຽນມາ ແລະ ຫວຽດນາມ. ເຊິ່ງຍັງລວມເຖິງກໍລະນີສຶກສາຈາກປະເທດໄທ.

ທ່ານສາມາດອ່ານບົດລາຍງານດັ່ງກ່າວໄດ້ທີ່ລິ້ງ https://bit.ly/3GHaVuc.

ອ່ານຕໍ່ໜ້າຖັດໄປ >>>



## ການລົງທຶນດ້ານກະສິກຳທີ່ຈຸດແຍກໃນກຳປູເຈຍ: ໄປສູ່ການລວມເອົາຊາວກະສິກອນຂະໜາດນ້ອຍ?

ສູນການສຶກສານະໂຍບາຍ (CPS), ສູນວິເຄາະບັນຫາການພັດທະນາ (ADIC) ແລະ MRLG ມີຄວາມຍິນດີທີ່ຈະປະກາດການພິມເຜີຍແຜ່ກໍລະນີສຶກສາໃໝ່ "ການລົງທຶນດ້ານກະສິກຳທີ່ຈຸດແຍກໃນປະເທດກຳປູເຈຍ: ໄປສູ່ການລວມເອົາຊາວກະສິກອນຂະຫນາດນ້ອຍ?", ພ້ອມກັບບົດສະຫຼຸບຫຍໍ້ຂອງການສຶກສາດຽວກັນ.

ທັດສະນະການລົງທຶນດ້ານກະສິກຳຂອງກຳປູເຈຍພວມປ່ຽນແປງຢ່າງວ່ອງໄວ. ຮູບແບບການພັດທະນາຂະຫນາດໃຫຍ່ທີ່ໄດ້ຮັບການສຳປະທານອຸດສາຫະກຳ-ກະສິກຳ ແລະ ຮູບແບບອື່ນໆຂອງການລົງທຶນທີ່ເຊື່ອມຕໍ່ຊາວກະສິກອນກັບບໍລິສັດ ແລະ ຕະຫຼາດແມ່ນໄດ້ຜົນຮັບທີ່ດີຂຶ້ນ. ເພື່ອກວດກາເບິ່ງຜົນກະທົບຂອງການຫັນປ່ຽນເຫຼົ່ານີ້ສຳລັບຊາວກະສິກອນຂະຫນາດນ້ອຍ, ກໍລະນີສຶກສານີ້ທົບທວນຄືນປະສົບການຂອງສີ່ປະເພດຂອງການລົງທຶນກະສິກຳທີ່ເຊື່ອມຕໍ່ກັບຊາວກະສິກອນຂະຫນາດນ້ອຍ. ຜົນການຄົ້ນຄວ້າໄດ້ເນັ້ນໃສ່ເຫດຜົນຂອງຊາວກະສິກອນທີ່ຈະເຮັດສັນຍາ, ການຈັດການສັນຍາ, ການບໍລິການສະຫນັບສະຫນູນດ້ານວິຊາການ, ແລະ ການຮັບຮູ້ຜົນໄດ້ຮັບຂອງສັນຍາສັນຍາ. ມັນຊີ້ໃຫ້ເຫັນເຖິງນະໂຍບາຍທີ່ສຳຄັນ ແລະ ຜົນກະທົບທາງສະຖາບັນ ແລະ ຄຳສະເໜີແນະເພື່ອເສີມຂະຫຍາຍຜົນປະໂຫຍດໃຫ້ແກ່ຊາວກະສິກອນຂະຫນາດນ້ອຍ.

ອ່ານບົດລາຍງານກໍລະນີສຶກສາ **ທີ່ນີ້** ແລະ ບົດສັງລວມຫຍໍ້ **ທີ່ນີ້**.

## ທີ່ດິນ ແລະ ການປ່ຽນແປງສະພາບອາກາດ #COP27

ໄດ້ມີການສ້າງສູນ **COP27 Land & Climate Change Hub** ທີ່ນຳເອົາບົດຄວາມທີ່ເນັ້ນໜັກໃສ່ເລື່ອງທີ່ດິນ ແລະການປ່ຽນແປງດິນຟ້າອາກາດ, ເຊິ່ງມີຊຸດບົດຄວາມຈາກບັນດາເພື່ອນຮ່ວມງານ **Land-at-Scale**, ຊຸດບົດຄວາມໄດ້ເຜີຍແຜ່ໂດຍຮ່ວມມືກັບ **Landesa**, **GLTN**, ແລະ **International Land. Coalition**, ແລະ ອ່ານເພີ່ມເຕີມໄດ້ທີ່ https://landportal.org/cop27

# ຂ່າວເດັ່ນປະຈຳໄຕມາດ

## ຍັງມີປະຊາຊົນ ຫຼາຍກວ່າ 1,000 ຄອບຄົວ ທີ່ຍັງບໍ່ທັນໄດ້ຮັບການຊົດເຊີຍ ຈາກໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ

ເມື່ອບໍ່ດົນມານີ້, ມີລາຍງານວ່າ ໃນໄລຍະ 6 ປີ ປະຊາຊົນ 1,000 ກວ່າຄອບຄົວ ທີ່ຖືກໂຍກຍ້າຍ ເນື່ອງມາຈາກການກໍ່ສ້າງ ເສັ້ນທາງລົດໄຟລາວ-ຈີນ ຍັງລໍຖ້າ ຄ່າຊົດເຊີຍ ຈາກ ບໍລິສັດ. ປະຊາຊົນ ຈຳນວນ 1.018 ຄອບຄົວ ຈາກ 6.855 ຄອບຄົວ ຄາດວ່າຈະໄດ້ຮັບຄ່າຊົດເຊີຍ ປະມານ 200 ຕື້ກວ່າກີບ ຫຼື ປະມານ 11 ລ້ານໂດລາສະຫະລັດ ໃນການກໍ່ສ້າງເສັ້ນທາງລົດໄຟ ໃນ 4 ແຂວງ ຄື: ວຽງຈັນ, ຫຼວງພະບາງ, ອຸດົມໄຊ, ຫຼວງນ້ຳທາ ແລະ ນະຄອນຫຼວງວຽງຈັນ.

ອ່ານບົດຄວາມຕົ້ນສະບັບໄດ້ທີ່ https://bit.ly/3J0lSsb.

## ປະຊາຊົນ ຢູ່ ແຂວງ ອຸດົມໄຊ ປະຕິເສດຄ່າຊົດເຊີຍ ສຳລັບການສູນເສຍທີ່ດິນ ໃນການສ້າງ "ເມືອງທັນສະໄໝ"

ປະຊາຊົນ ຢູ່ ແຂວງອຸດົມໄຊ ປະຕິເສດ ຂໍ້ສະເໜີ ຂອງລັດຖະບານ ໃນການຊົດເຊີຍທີ່ດິນປູກຝັງ ຂອງເຂົາເຈົ້າທີ່ໃຫ້ ບໍລິສັດສັນຊາດໄທເຊົ່າເພື່ອສ້າງ "ເມືອງທັນສະໄໝ" ໃນພື້ນທີ່, ໂດຍກ່າວວ່າ ຄ່າຊົດເຊີຍນັ້ນໜ້ອຍເກີນໄປ ເພື່ອໃຫ້ປະຊາຊົນຍົກຍ້າຍ.

ໃນວັນທີ 25 ສິງຫາ ທີ່ຜ່ານມາ, ລັດຖະບານລາວໄດ້ລົງນາມໃນສັນຍາຮ່ວມກັບ ບໍລິສັດ ອາມາຕະ ຮ່ວມມື ຈຳກັດ ເຊິ່ງປະຈຳຢູ່ບາງກອກ, ເຊິ່ງເປັນໜຶ່ງໃນຜູ້ພັດທະນາ ແລະ ດຳເນີນທຸລະກິດອຸດສາຫະກຳຊັ້ນນຳຂອງໄທ, ໂດຍລັດອະນຸຍາດໃຫ້ນຳໃຊ້ເນື້ອທີ່ 3,150 ເຮັກຕາ (7,785 ເອເຄີ) ຢູ່ເມືອງນາໝໍ້ເພື່ອພັດທະນາເປັນເມືອງທັນສະໄໝ ແລະ ນິເວດວິທະຍາຢູ່ທີ່ນັ້ນ, ເຖິງແມ່ນວ່າພື້ນທີ່ບາງສ່ວນເປັນພື້ນທີ່ປູກຝັງຂອງປະຊາຊົນເຂດນັ້ນ.

ອ່ານຂ່າວຕົ້ນສະບັບໄດ້ທີ່ https://bit.ly/3CljUPh

ອ່ານຕໍ່ໜ້າຖັດໄປ >>>



## ຄວາມລົ້ມເຫຼວໃນການຮ້ອງຟ້ອງເຂື່ອນຂອງລາວ ໄດ້ສະແດງໃຫ້ເຫັນວ່າຕ້ອງມີປັບປຸງຂໍ້ຕົກລົງຂ້າມຊາຍແດນ

ນທີ 17 ສິງຫານີ້, ສານປົກຄອງສູງສຸດຂອງໄທໄດ້ຕັດສິນຍົກເລີກຄຳຟ້ອງຮ້ອງໂດຍຊາວບ້ານຊາວໄທ 37 ຄົນ ທີ່ຍື່ນຟ້ອງໜ່ວຍງານລັດຂອງໄທ 5 ແຫ່ງ ຖາມໃນການອະນຸມັດສັນຍາຊື້ໄຟຟ້າ(PPA) ຂອງເຂື່ອນໄຟຟ້າພະລັງງານ້ຳ ໄຊຍະບູລີ.

ເມື່ອ 10 ປີກ່ອນ, ການຟ້ອງຮ້ອງເຂື່ອນໄຊຍະບູລີ ເປັນຄະດີທຳອິດຂອງຊຸມຊົນທີ່ກ່ຽວຂ້ອງກັບການສ້າງເຂື່ອນໃສ່ແມ່ນ້ຳຂອງ, ແລະ ເປັນຄະດີທຳອິດກ່ຽວກັບໂຄງການຂ້າມຊາຍແດນ. ການຮ້ອງຟ້ອງດັ່ງກ່າວໄດ້ຖືກຟ້ອງຮ້ອງຕໍ່ 5 ອົງການລັດຂອງໄທ, ລວມທັງຄະນະນະໂຍບາຍພະລັງງານແຫ່ງຊາດ, ຄະນະລັດຖະບານໄທ, ແລະ ອົງການຜະລິດໄຟຟ້າແຫ່ງປະເທດໄທ (EGAT) ສຳລັບບົດບາດຂອງຕົນໃນການອະນຸມັດ PPA ຂອງໂຄງການ.

ການຟ້ອງຮ້ອງດັ່ງກ່າວ ຢືນຢັນວ່າ PPA ແມ່ນຜິດກົດໝາຍ ທັງພາຍໃຕ້ລັດຖະທຳມະນູນຂອງໄທ ແລະ ສັນຍາແມ່ນ້ຳຂອງປີ 1995. ການຮຽກຮ້ອງດັ່ງກ່າວ ແມ່ນອີງໃສ່ອົງການໄທ ບໍ່ໃຫ້ຂໍ້ມູນ, ປະເມີນຜົນກະທົບ (ລວມທັງຜົນກະທົບຂ້າມແດນ), ແລະ ຮັບປະກັນການມີສ່ວນຮ່ວມຂອງປະຊາຊົນ ໃນການຕັດສິນໃຈຊື້ໄຟຟ້າຈາກເຂື່ອນ.

ອ່ານເພີ່ມເຕີມທີ່ http://bit.ly/3e919Wa.

## ດຳລັດ ວ່າດ້ວຍການການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (EIA), ເລກທີ 389/ລບ, ນະຄອນຫຼວງວຽງຈັນ ລົງວັນທີ 20 ຕຸລາ 2022

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເພື່ອໃຫ້ວຽກງານດັ່ງກ່າວ ດຳເນີນຢ່າງຖືກຕ້ອງ, ໂປ່ງໃສ ແລະ ເອກະພາບ ແນໃສ່ປ້ອງກັນ, ຫຼຸດຜ່ອນ, ແກ້ໄຂຜົນກະທົບທາງລົບຕໍ່ສິ່ງແວດລ້ອມ, ຮັບປະກັນການທົດແທນຄ່າເສຍຫາຍຢ່າງສົມເຫດສົມຜົນ, ການຈັດສັນພູມລຳເນົາ ແລະ ອາຊີບ ແລະ ຟື້ນຟູຊີວິດການເປັນຢູ່ ຂອງຜູ້ໄດ້ຮັບຜົນກະທົບໃຫ້ດີຂຶ້ນກວ່າເກົ່າ, ເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ມີປະສິດທິຜົນສູງສຸດ, ຮັບປະກັນສິດ ແລະ ຜົນປະໂຫຍດຂອງຊາດ ແລະ ປະຊາຊົນ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

ທ່ານສາມາດອ່ານ ແລະ ດາວໂຫລດດຳລັດສະບັບນີ້ໄດ້ທີ່: https://bit.ly/3SvkxuF

## ການກໍ່ສ້າງທີ່ຢູ່ອາໄສໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ຈາກໄພພິບັດເຂື່ອນແຕກ ຢູ່ແຂວງ ອັດຕະປື ປີ 2018 ໃກ້ສຳເລັດ

ໂຄງການກໍ່ສ້າງທີ່ຢູ່ອາໄສໃຫ້ແກ່ຜູ້ປະສົບໄພນ້ຳຖ້ວມ 700 ຫຼັງຄາ, ມູນຄ່າ 24,5 ລ້ານໂດລາສະຫະລັດ, ໄດ້ເລີ່ມລົງມືກໍ່ສ້າງໃນເດືອນ ມິຖຸນາ 2020 ໂດຍໄດ້ຮັບທຶນຊ່ວຍເຫຼືອຈາກຜູ້ພັດທະນາເຂື່ອນດັ່ງກ່າວ.

ແຕ່ເນື່ອງຈາກຄວາມລ່າຊ້າ ແລະ ຄວາມເສຍຫາຍຕ່າງໆ ເຮັດໃຫ້ ຜູ້ໄດ້ຮັບຜົນກະທົບຈາກເຫດການດັ່ງກ່າວ ຕ້ອງລໍຖ້າທີ່ຢູ່ອາໄສໃໝ່ ເປັນເວລາ 4 ປີ ເຖິງວ່າຈະມີການສະໜອງທຶນໃຫ້ແກ່ລັດຖະບານຈາກຜູ້ປະກອບການສ້າງເຂື່ອນ ຫຼັງຈາກໄພພິບັດໄດ້ເກີດຂຶ້ນ.

ທ່ານ ບຸນເສີດ ສິດທິລາດ, ຮອງເຈົ້າແຂວງ ອັດຕະປື ກ່າວໃນກອງປະຊຸມຂັ້ນແຂວງເມື່ອບໍ່ດົນມານີ້ວ່າ: ທີ່ຢູ່ອາໄສໃນຈຳນວນ 700 ຫຼັງຄາ ທີ່ໄດ້ຮັບການກໍ່ສ້າງໃຫ້ແກ່ຜູ້ປະສົບໄພນ້ຳຖ້ວມຍັງບໍ່ທັນຄົບຖ້ວນ.

ອ່ານລາຍລະອຽດເພີ່ມເຕີມໄດ້ທີ່ https://bit.ly/41bXla8.

ອ່ານຕໍ່ໜ້າຖັດໄປ >>>



## ກິດຈະກຳທີ່ຈະມາເຖິງໄວໆນີ້ (ເດືອນ ມັງກອນ ຫາ ເມສາ 2023)

- ອັບເດດຂ່າວສານ ໂຄງການ PIASVC: ToTs, MoU ແລະ ການປະຕິບັດໂຄງການຂອງ ອົງກອນຜູ້ຮັບທຶນ
- ການຜະລິດວິດີໂອ ປະຕິທິນກົດໝາຍ ປີ 2023
- ການລົງເຮັດວຽກພາກສະໜາມຂອງ ກອງເລຂາ LIWG ຢູ່ຕ່າງແຂວງ
- ກອງປະຊຸມໃຫຍ່ LIWG ປະຈຳປີ 2023
- ກອງປະຊຸມໜ່ວຍງານວິຊາການ ຂະແໜງການຍ່ອຍທີ່ດິນ ປີ 2023

## ຂອບໃຈທີ່ອ່ານຈົດໝາຍຂ່າວຂອງພວກເຮົາ!



ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ

LIWG